**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 60 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08 / 07 / 22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາ ຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປີ 2020;
- ອີງຕາມ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2020;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການພັດທະນາຊັບພະຍາກອນມະນຸດ ຕາມຂະແໜງການບຸລິມະສິດ ໃນສາຂາ ກະສິກຳ, ຄູ ແລະ ພະຍາບານ ສະບັບເລກທີ 17/ສພຊ, ລົງວັນທີ 25 ມິຖຸນາ 2019;
- ອີງຕາມ ບົດລາຍງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ ລົງວັນທີ 17 ມິຖຸນາ 2022 ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX.

ຜ່ານການຮັບຟັງການລາຍງານ, ການຕິດຕາມກວດກາ ແລະ ການຄົ້ນຄວ້າ ປະກອບຄຳເຫັນຂອງກອງປະຊຸມສະພາແຫ່ງຊາດ ຢ່າງກວ້າງຂວາງ ເລິກເຊິ່ງ ຕໍ່ບົດລາຍງານຂອງລັດຖະບານ ໃນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ.

ກອງປະຊຸມຕົກລົງຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ ຊຶ່ງລັດຖະບານໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດ ໃນສະພາບມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ບວກກັບການແຜ່ລະບາດຂອງພະຍາດໂຄວິດ-19 ແຕ່ລັດຖະບານກໍສາມາດຈັດຕັ້ງປະຕິບັດບັນດາຍຸດທະສາດທີ່ກຳນົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ໄດ້ມີການປັບປຸງຄຸນນະພາບຂອງການສຶກສາ ຕາມ 3 ລັກສະນະ ແລະ 5 ຫຼັກມູນ ຂອງການສຶກສາ, ການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງທີ 4 (SDG 4) ມີຜົນສຳເລັດໃນຫຼາຍດ້ານ ເຮັດໃຫ້ວຽກງານສຶກສາ ແລະ ກິລາ ເຕີບໃຫຍ່ຂະຫຍາຍຕົວ ສາມາດບັນລຸດັດຊະນີຊັບສິນມະນຸດ (HAI) ຂອງປະເທດ ເພື່ອໃຫ້ສາມາດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDC).

ຄຽງຄູ່ກັນນັ້ນ, ກອງປະຊຸມ ຍັງເຫັນວ່າ ການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງການສຶກສາທິການ ແລະ ກິລາ ຍັງມີຫຼາຍຄາດໝາຍບໍ່ບັນລຸຕາມແຜນການ ແລະ ມີທ່າອ່ຽງຫົດຖອຍ ເປັນຕົ້ນ ອັດຕາປະລະການຮຽນໃນສາຍສາມັນສຶກສາ, ອັດຕາຄ້າງຫ້ອງຂອງນັກຮຽນ ປ.1, ອັດຕາສ່ວນນັກຮຽນທີ່ຈົບມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ວິຊາຊີບ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່, ການແກ້ໄຂບັນຫາຄູເຫຼືອບໍ່ພໍ, ການບັນຈຸລັດຖະກອນຄູ ແລະ ບໍລິຫານ, ການແກ້ໄຂບັນຫາຄູອາສາສະໝັກ ຕາມມະຕິ ສະບັບເລກທີ 17/ສພຊ, ລົງວັນທີ 25 ມິຖຸນາ 2019 ຍັງຫຼາຍບັນຫາບໍ່ທັນໄດ້ຮັບການແກ້ໄຂ ເນື່ອງຈາກສະພາບແວດລ້ອມ, ສິ່ງອຳນວຍຄວາມສະດວກຫຼາຍດ້ານຍັງຈຳກັດ, ຄວາມເປັນເຈົ້າການຂອງຄູ-ອາຈານ, ນັກຮຽນ, ນັກສຶກສາ ກໍຄືພົນລະເມືອງລາວຈຳນວນໜຶ່ງ ບໍ່ມັກອ່ານ ແລະ ບໍ່ມັກຄົ້ນຄວ້າຮ່ຳຮຽນເພື່ອພັດທະນາຕົນເອງ ຍັງມີລັກສະນະແລ່ນນຳຄ່ານິຍົມທີ່ບໍ່ຖືກຕ້ອງ, ພື້ນຖານໂຄງລ່າງ, ອຸປະກອນການຮຽນ-ການສອນ, ການຫຼິ້ນກິລາ ຍັງບໍ່ພຽງພໍ, ການຄຸ້ມຄອງບໍລິຫານວຽກງານກິລາ-ກາຍຍະກຳບໍ່ທັນໂລ່ງລ່ຽນ, ການສ້າງ, ພັດທະນາບຸກຄະລາກອນກິລາ-ກາຍຍະກຳ, ນັກກິລາ ບໍ່ທັນເປັນລະບົບຕໍ່ເນື່ອງ ແລະ ເປັນມືອາຊີບ, ການເຄື່ອນໄຫວວຽກງານກິລາ-ກາຍຍະກຳບໍ່ທັນເປັນຂະບວນຟົດຟື້ນ ແລະ ຄຸນນະພາບຍັງຈຳກັດ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ກ່ຽວກັບການການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ.**

ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນ ທີ່ກຳນົດໄວ້ຢູ່ໃນທິດທາງແຜນການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ຊຶ່ງປະກອບມີ 4 ມາດຕະການໄລຍະສັ້ນ, 9 ມາດຕະການໄລຍະກາງ ແລະ ໄລຍະຍາວ; ມີ 16 ມາດຕະການ ໃນການແກ້ໄຂບັນຫາຄູເຫຼືອບໍ່ພໍ, ການບັນຈຸລັດຖະກອນຄູ ແລະ ບໍລິຫານ, ການແກ້ໄຂບັນຫາຄູອາສາສະໝັກ ແລະ ມີ 8 ມາດຕະການ ໃນການຄຸ້ມຄອງວຽກງານກິລາ-ກາຍຍະກຳ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາທິດທາງແຜນການ ແລະ ມາດຕະການຂອງລັດຖະບານ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ຍົກສູງຄຸນນະພາບຂອງການສຶກສາ ແລະ ກິລາ ຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ໃຫ້ຄົບຖ້ວນ ແລະ ເປັນບຸລິມະສິດ ເພື່ອສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄວາມຮັກຊາດ ແລະ ມີຄວາມພູມໃຈໃນຊາດ, ມີຄຸນສົມບັດ, ມີຄວາມຮູ້, ມີຄວາມສາມາດ, ມີວິຊາຊີບ, ມີຄວາມຊຳນານງານ ໃນຫຼາກຫຼາຍສາຂາອາຊີບຕາມຄວາມຕ້ອງການຕະຫຼາດແຮງງານ ເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່ ແລະ ສາມາດເຊື່ອມໂຍງ, ແຂ່ງຂັນ ກັບພາກພື້ນ ແລະ ສາກົນ;

2. ຂະແໜງສຶກສາທິການ ແລະ ກິລາຕ້ອງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ກຳນົດມາດຕະການ, ວິທີການເພື່ອສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ບັນລຸແລ້ວ ໃຫ້ມີຄວາມຍືນຍົງ ແລະ ສຸມໃສ່ແກ້ໄຂບັນດາຄາດໝາຍທີ່ບໍ່ບັນລຸໃຫ້ມີຄວາມຄືບໜ້າ ແລະ ສາມາດບັນລຸຕາມແຜນການ ໂດຍສະເພາະແມ່ນບັນດາຄາດໝາຍທີ່ມີທ່າອ່ຽງທົດຖອຍຕໍ່ເນື່ອງມາເປັນເວລາຫຼາຍປີ ໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ;

3. ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ຄູສອນ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ ໃຫ້ສົມເປັນແມ່ພິມຂອງຊາດ; ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການສຶກສາ, ກໍ່ສ້າງ, ຝຶກອົບຮົມ ແລະ ຍົກລະດັບ ຄູສອນ, ຜູ້ອຳນວຍການໂຮງຮຽນ, ຜູ້ບໍລິຫານການສຶກສາ ແລະ ກິລາ ໃຫ້ໄດ້ມາດຕະຖານ ແລະ ເປັນມືອາຊີບ;

- ກວດກາ, ເກັບກຳຂໍ້ມູນ ກ່ຽວກັບລັດຖະກອນຄູ, ຄູເຫຼືອບໍ່ພໍ ແລະ ຄູອາສາສະໝັກໃຫ້ມີຄວາມຊັດເຈນ ເພື່ອສັບຊ້ອນ, ຈັດສັນຄືນໃໝ່ໃຫ້ເໝາະສົມ ເປັນຕົ້ນ ຄູອາສາສະໝັກທີ່ສອນມາໄດ້ຫຼາຍປີ ແລະ ມີຄຸນນະພາບ ໃຫ້ໄດ້ຮັບການບັນຈຸເຂົ້າເປັນລັດຖະກອນຄູ ຫຼື ພາລາກອນຄູ; ຕິດຕາມກວດກາ ແລະ ຄວບຄຸມການຍົກຍ້າຍຂອງລັດຖະກອນຄູຢູ່ເຂດຫ່າງໄກສອກຫຼີກເຂົ້າສູ່ຕົວເມືອງ ຫຼື ຍົກຍ້າຍໄປເປັນລັດຖະກອນບໍລິຫານ ລວມທັງການຍົກຍ້າຍໄປຂະແໜງການອື່ນ, ສືບຕໍ່ເກັບກຳຂໍ້ມູນລັດຖະກອນຄູສາຍວິຊາສະເພາະທີ່ຍັງຂາດເຂີນ ເພື່ອວາງແຜນສ້າງໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ລວມທັງແຜນສ້າງຄູ ແລະ ແຜນຮັບຄູຕ້ອງໃຫ້ກົມກຽວກັນ; ເອົາໃຈໃສ່ປຸກລະດົມຂົນຂວາຍລັດຖະກອນຄູຢູ່ໃນຕົວເມືອງທີ່ເຫຼືອ ລົງໄປປະຈຳຢູ່ຊົນນະບົດ ແລະ ປະຕິບັດນະໂຍບາຍດ້ານວັດຖຸ ແລະ ຈິດໃຈຕໍ່ຄູສອນ, ຜູ້ອຳນວຍການ, ຜູ້ບໍລິຫານ ທີ່ມີຜົນງານດີເດັ່ນ ໂດຍສະເພາະຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ ໃຫ້ທັນເວລາ;

4. ທົບທວນ, ປັບປຸງລະບົບການສຶກສາ ແລະ ຫຼັກສູດຂັ້ນສາມັນພາກບັງຄັບ (ຊັ້ນປະຖົມ) ໃຫ້ມີຄວາມແທດເໝາະກັບສະພາບຄວາມເປັນຈິງຂອງປະເທດ, ສອດຄ່ອງກັບແຕ່ລະກຸ່ມເປົ້າໝາຍຜູ້ຮຽນ; ຄົ້ນຄວ້າ ຮູບແບບ ແລະ ວິທີການສິດສອນ ໂດຍຖືເອົານັກຮຽນ, ນັກສຶກສາເປັນໃຈກາງ ໃຫ້ມີຄວາມຫຼາກຫຼາຍ ເຊັ່ນ: ການຮຽນແບບກັບທີ່ໃນຫ້ອງຮຽນ, ການຮຽນນອກສະຖານທີ່, ການຮຽນທາງໄກ, ແບບອອນລາຍ, ຜ່ານວິທະຍຸ, ໂທລະພາບ ແລະ ອື່ນໆ ພ້ອມທັງຜະລິດສື່ການຮຽນ-ການສອນ ໃຫ້ເໝາະສົມກັບແຕ່ລະຮູບແບບ ເພື່ອສ້າງເງື່ອນໄຂໃຫ້ພົນລະເມືອງລາວໄດ້ເຂົ້າເຖິງການສຶກສາຢ່າງເທົ່າທຽມ ແລະ ທົ່ວເຖິງ ກ້າວໄປສູ່ຫັນການສຶກສາເປັນດີຈິຕອນ;

5. ຄົ້ນຄວ້າ ສະໜອງໂຄງລ່າງພື້ນຖານ, ສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ຖືກສຸຂະອານາໄມ, ສະໜອງອຸປະກອນການຮຽນ-ການສອນ, ການຫຼິ້ນກິລາ ແລະ ສິນລະປະ, ອາຫານທ່ຽງໃນໂຮງຮຽນເປົ້າໝາຍ ເພື່ອສ້າງແຮງຈູງໃຈໃຫ້ນັກຮຽນມາໂຮງຮຽນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ປົກຄອງ ລວມທັງສ້າງຄວາມເຂັ້ມແຂງໃຫ້ສະຖານການສຶກສາມີຄວາມສາມາດໃນການຮັບມືກັບໄພສຸກເສີນ ແລະ ການແຜ່ລະບາດຂອງພະຍາດຕ່າງໆ;

6. ເພີ່ມທະວີການຮ່ວມມືລະຫວ່າງຂະແໜງສຶກສາທິການ ແລະ ກິລາ ກັບ ອົງການປົກຄອງທ້ອງຖິ່ນ, ຄະນະພັດທະນາການສຶກສາແຕ່ລະຂັ້ນ, ອົງການຈັດຕັ້ງທາງສັງຄົມ, ຊຸມຊົນ, ຄອບຄົວ, ພໍ່ແມ່ ແລະ ຜູ້ປົກຄອງ ໃນການສ້າງຈິດສຳນຶກ ແລະ ຄ່ານິຍົມທີ່ຖືກຕ້ອງໃຫ້ແກ່ລູກຫຼານ ໃຫ້ເປັນຄົນມັກອ່ານ, ມັກຄົ້ນຄວ້າຮ່ຳຮຽນສະແຫວງຫາຄວາມກ້າວໜ້າ, ມີວິໄນ, ດຸໝັ່ນອອກແຮງງານ, ປະຢັດມັດທະຍັດ, ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກກຽດສັກສີຂອງຕົນເອງ ແລະ ຄອບຄົວ, ຮູ້ຮັກສາສຸຂະພາບແຕ່ຍັງເຍົາໄວ; ເປັນເຈົ້າການປະກອບສ່ວນ ພັດທະນາວຽກງານການສຶກສາ ແລະ ກິລາ ໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝ; ສົ່ງເສີມພາກສ່ວນເອກະຊົນໃຫ້ມີສ່ວນຮ່ວມໃນການພັດທະນາການສຶກສາໃນທຸກຂັ້ນທຸກສາຍ;

7. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຄະນະພັດທະນາການສຶກສາແຕ່ລະຂັ້ນ ລວມເຖິງພໍ່ແມ່, ຜູ້ປົກຄອງ ເພື່ອປຸກລະດົມຂົນຂວາຍໃຫ້ນັກຮຽນທີ່ປະລະການຮຽນກັບມາຮຽນຄືນ; ສ້າງເງື່ອນໄຂ ແລະ ໂອກາດໃຫ້ນັກຮຽນໃນເກນທີ່ສາມາດຮຽນເຕັກນິກ ແລະ ວິຊາຊີບໄດ້ເຂົ້າຮຽນໃນສະຖານອາຊີວະສຶກສາໃຫ້ທົ່ວເຖິງ; ປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ກ່ຽວກັບແຜນຝຶກອົບຮົມວິຊາຊີບ, ການສ້າງ ແລະ ພັດທະນາ

ສີມືແຮງງານ, ແຜນຄວາມຕ້ອງການຂອງຕະຫຼາດແຮງງານ ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ມີສີມືແຮງງານທີ່ມີຄຸນນະພາບ ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ;

8. ປັບປຸງກົນໄກການຈັດຕັ້ງປະຕິບັດວຽກງານຕິດຕາມ, ປະເມີນຜົນ ແລະ ປະກັນຄຸນນະພາບການສຶກສາ ທຸກຊັ້ນທຸກສາຍ ທັງພາກລັດ ແລະ ເອກະຊົນ ໃຫ້ເປັນປົກກະຕິ, ສ້າງຖານຂໍ້ມູນໃຫ້ເປັນລະບົບທີ່ທັນສະໄໝສາມາດເຊື່ອມຕໍ່ໃນຂອບເຂດທົ່ວປະເທດ;

9. ເອົາໃຈໃສ່ພັດທະນາ ບຸກຄະລາກອນກິລາ-ກາຍຍະກຳ, ນັກກິລາ ໃຫ້ເປັນມືອາຊີບຂອງແຕ່ລະທ້ອງຖິ່ນ, ຄົ້ນຄວ້າ ແລະ ປັບປຸງກົງຈັກການຈັດຕັ້ງຂອງສະຖານການສຶກສາກິລາ-ກາຍຍະກຳ ທີ່ມີພາລະບົດບາດຊໍ້າຊ້ອນກັນ ໃຫ້ລວມສູນຕາມທິດກະທັດຮັດ ແລະ ມີປະສິດທິຜົນ; ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປັບປຸງ ການເຄື່ອນໄຫວຂອງຄະນະກຳມະການກິລາແຫ່ງຊາດ, ສະຫະພັນກິລາແຫ່ງຊາດ, ແຂວງ ແລະ ຂະແໜງການ, ສະມາຄົມ, ສະໂມສອນກິລາ-ກາຍຍະກຳ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. ເພີ່ມທະວີການສຶກສາອົບຮົມການເມືອງແນວຄິດໃຫ້ບຸກຄະລາກອນກິລາ-ກາຍຍະກຳ ແລະ ນັກກິລາ ເພື່ອຮັບປະກັນໃຫ້ໄດ້ຄົນດີ ຄົນເກັ່ງ, ມີຄຸນສົມບັດສົມທຳປະຕິວັດ, ມີນໍ້າໃຈຮັກຊາດ, ມີຈັນຍາບັນ, ຈັນຍາທຳ, ມີລະບຽບວິໄນ, ປະຕິບັດກົດໝາຍຢ່າງເຂັ້ມງວດ ເປັນເຈົ້າການຕ້ານປະກົດການຫຍໍ້ທໍ້; ເອົາໃຈໃສ່ຄຸ້ມຄອງ ແລະ ນຳໃຊ້ສະໜາມກິລາ, ພື້ນຖານໂຄງລ່າງກິລາ-ກາຍຍະກຳ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

10. ສະເໜີລັດຖະບານພິຈາລະນາເພີ່ມງົບປະມານໃຫ້ແກ່ຂະແໜງສຶກສາທິການ, ວິທະຍາສາດ ແລະ ກິລາ, ພ້ອມກັນນັ້ນ ໃຫ້ເອົາໃຈໃສ່ການຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງລັດ, ທຶນຊ່ວຍເຫຼືອຂອງສາກົນ ຂອງຂະແໜງສຶກສາທິການ ແລະ ກິລາໃຫ້ມີປະສິດທິພາບສູງ;

11. ຊຸກຍູ້ສົ່ງເສີມວຽກງານຄົ້ນຄວ້າວິທະຍາສາດ ໃຫ້ສາມາດປະກອບສ່ວນເຂົ້າໃນການພັດທະນາການສຶກສາ ແລະ ການພັດທະນາເສດຖະກິດ-ສັງຄົມ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານ ຊີ້ນຳກະຊວງສຶກສາທິການ ແລະ ກິລາ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ຄະນະປະຈຳສະພາແຫ່ງຊາດ, ກຳມາທິການວັດທະນະທຳ-ສັງຄົມ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ